## *ການອະນຸມັດເງິນເທື່ອດຽວ*

ການອະນຸມັດເງິນທຶນເທື່ອດຽວແມ່ນການຈ່າຍເງິນໃຫ້ແກ່ບຸກຄົນແລະຄອບຄົວຜູ້ທີ່ສອດຄ່ອງນຳກົດກຳນົດເງື່ອນໄຂໄດ້ຮັບໂຄງການ IFSແລະມີຄວາມຕ້ອງການເທື່ອດຽວທີ່ບໍ່ຖືກຄຸ້ມກັນໂດຍບ່ອນຊ່ວຍບ່ອນອື່ນ.ການບໍລິການສາມາດຖືກເອົາໃຫ້ສຳລັບການອະນຸມັດເງິນເທື່ອດຽວແມ່ນການດັດແປງໃຫ້ໃຊ້ການໄດ້ໃນເຮືອນ,ຣົດ,ຫລືອຸປກອນພິເສດ.

## *ການໃຫ້ເງິນທຶນສຸກເສີນ*

ການບໍລິການສຸກເສີນແມ່ນການເບິ່ງແຍງດູແລຊົ່ວຄາວ, ການກຳກັບຄວບຄຸມນຳການປະພຶດຫລືການບໍລິການເບິ່ງແຍງຜູ້ເຖົ້າຕອບສະນອງຕໍ່ເຫດການອັນໂຄດດ່ຽວ,ສະພາບການຫລືພາວະເດືອດຮ້ອນຣະຍະສັ້ນ. ທ່ານມີເງື່ອນໄຂທີ່ຈະຖືກພິຈາຣະນາເບິ່ງສຳລັບການອະນຸມັດເງິນເທື່ອດຽວແລະເງິນທຶນສຸກເສີນຖ້າຫາກວ່າ:

- *ທ່ານບໍ່ໄດ້ຖືກອະນຸມັດສຳລັບການບໍລິການຂອງໂຄງການ IFS ໃນປັດຈຸບັນນີ້;*
- *ຄວາມຕ້ອງການແມ່ນສຳຄັນຕໍ່ສຸຂະພາບແລະຄວາມປອດພັຍຂອງທ່ານຫລືຜູ້ເບິ່ງແຍງດູແລຂອງທ່ານ;ແລະ*
- *ທ່ານແລະຄອບຄົວຂອງທ່ານບໍ່ມີບ່ອນຊ່ວຍເຫລືອບ່ອນອື່ນເພື່ອຈະຕອບສະນອງຄວາມຕ້ອງການອັນນີ້.*

*ກົມDSHSບໍ່ແບ່ງແຍກຊົນຊັ້ນວັນນະແລະເອົາການເຂົ້າເຖິງທີ່ສະເມີພາບໃຫ້ເຖິງໂຄງການແລະການບໍລິການຂອງເຂົາເຈົ້າໂດຍປາສຈາກການເບິ່ງໃສ່ຜິວພັນ,ສີສັນ,ເພດ,ສາສະນາ,ລັດທິ,ສະພາບແຕ່ງງານ,ເຊື້ອຊາດດັ້ງເດີມ,ຄວາມຊອບໃຈ/ການປັບຕົວເຂົ້າທາງເພດ,ອາຍຸ,ສະພາບນັກຣົບເກົ່າຫລືການປາກົດມີຄວາມເສັຽອົງຄະທາງຮ່າງກາຍ,ຄວາມຮູ້ສຶກຫລືນັນສະນອງຕ່າງໆ.*




ຫ້ອງຖິ່ນ1
1611 W. Indiana Ave.
Spokane, WA 99205-4221
ໂທຣະສັບ (509) 329-2900
1 (800) 462-0624

ຫ້ອງຖິ່ນ2
3700 Fruitvale Blvd.
Ste. 200
Yakima, WA 98909-2500
ໂທຣະສັບ (509) 225-4620
1 (800) 822-7840

ຫ້ອງຖິ່ນ3
840 N. Broadway
Bldg. A. Suite 100
Everett, WA 98201-1288
ໂທຣະສັບ (425) 339-4833
1 (800) 788-2053

ຫ້ອງຖິ່ນ4
1700 E. Cherry St. # 200
Seattle, WA 98122
ໂທຣະສັບ (206) 568- 5700
1 (800) 314-3296

ຫ້ອງຖິ່ນ5
1305 Tacoma Ave. S.
Suite 300
Tacoma, WA 98402
ໂທຣະສັບ (253) 404-6500
1 (800) 248-0949

ຫ້ອງຖິ່ນ6
Point Plaza East
Bldg. 2, 3rd Floor
6860 Capitol Blvd. SE
Olympia, WA 98504-5315
ໂທຣະສັບ(360) 725-4250
1 (800) 339-8227

ເພື່ອຣາຍລະອຽດເພີ້ມເຕີມ,
ແວ່ເຂົ້າເບິ່ງແວບໄຊທ໌ຂອງໄດ້ທີ່:

**www.dshs.wa.gov/ddd**

Washington State
Department of Social & Health Services

ADSA Aging & Disability Services Administration

**Division of Developmental Disabilities**

# ໂຄງການບໍລິການສ່ວນບຸກຄົນແລະຄອບຄົວ

*ຣາຍລະອຽດກ່ຽວກັບເງື່ອນໄຂຮັບເອົາ,ການເຂົ້າເຖິງ,ແລະການບໍລິການ*

Washington State
Department of Social & Health Services

DSHS 22-038(X) LA Rev. 3/09

**www.dshs.wa.gov/ddd/index.shtml**

# ສລູບຄວາມຫຍໍ້ຂອງການບໍຣິການສ່ວນບຸກຄົນແລະຄອບຄົວ

ໂຄງການບໍຣິການສ່ວນບຸກຄົນແລະຄອບຄົວ (IFS) ເປັນໂຄງການທີ່ໄດ້ຮັບເງິນທຶນມາຈາກຣັດເທົ່ານັ້ນຊຶ່ງເອົາການບໍຣິການມາກມາຍຫລາຍຢ່າງໃຫ້ເພື່ອຈະຊ່ວຍເຫລືອຄອບຄົວໃຫ້ຮັກສາເອົາໄວ້ແລະເຮັດໃຫ້ຫຸ່ມທ່ຽງຂະນາດຂອງຄອບຄົວ.

ໂຄງການີຟສລວມເຂົ້າກັນໂຄງການອູ້ມຊູຄອບຄົວສາມໂຄງການຜ່ານມາ (ຕາມປະເພນີ,ໂອກາດ,ແລະການທົດລອງອູ້ມຊູຄອບຄົວ) ເຂົ້າມາເປັນອັນນຶ່ງ.

ໂຄງການີຟສມີຈຸດປະສົງທີ່ຈະເປັນການຮ່ວມມືກັນຣະຫວ່າງຣັດແລະຄອບຄົວທີ່ຈະ:

- *ຊ່ວຍອູ້ມຊູຄອບຄົວຜູ້ທີ່ມີສະມາຊິກຄອບຄົວຜູ້ທີ່ມີເງື່ອນໄຂໄດ້ຮັບDDDຜູ້ທີ່ອາສັຍຢູ່ໃນເຮືອນຂອງຄອບຄົວ;*
- *ຊ່ວຍຄອບຄົວດ້ວຍທາງເລືອກເອົາການບໍຣິການ;ແລະ*
- *ອະນຸຍາດໃຫ້ຄອບຄົວຄວບຄຸມໄດ້ຫລາຍກວ່າເກົ່າໃນບ່ອນຊ່ວຍເຫລືອທີ່ແຈກຈ່າຍໃຫ້ເຂົາເຈົ້າ.*

## ກົດເກນຂອງເງື່ອນໄຂຮັບເອົາີຟສ

ທ່ານມີເງື່ອນໄຂທີ່ຈະຖືກພິຈາຣະນາສຳລັບໂຄງການIFS ຖ້າຫາກວ່າ:

- *ທ່ານກຳລັງເປັນລູກຄ້າມີເງື່ອນໄຂໄດ້ຮັບຂອງ DDDໃນປັດຈຸບັນນີ້ຢູ່;*
- *ທ່ານອາສັຍຢູ່ໃນເຮືອນຂອງຄອບຄົວຂອງທ່ານ;*
- *ທ່ານບໍ່ໄດ້ຈົດຊື່ເຂົ້າໃນການສະລະສິດຂອງການບໍຣິການຢູ່ຕາມເຮືອນແລະຊຸມນຸມຊົນ (HCBS) ຂອງພະແນກ DDD;*
- *ທ່ານມີອາຍຸໄດ້ສາມປີຫລືແກ່ກວ່າ;ແລະ*
- *ທ່ານບໍ່ໄດ້ຮັບການບໍຣິການຜູ້ໃຫຍ່ຫລືເດັກນ້ອຍຢູ່ຕາມເຮືອນຂອງພະແນກ DDD,ຫລືການເບິ່ງແຍງດູແລລູກກຳພ້າທີ່ມີໃບອະນຸຍາດ.*

## ການເຂົ້າເຖິງີຟສ

ທ່ານອາດຈະຕິດຕໍ່ໄປຫາຜູ້ຈັດການຊ່ວຍເຫລືອເອກສານDDD ຂອງທ່ານເພື່ອຈະຮ້ອງຂໍເອົາການບໍຣິການຂອງໂຄງການIFS.ທ່ານຈະໄດ້ຮັບຫນັງສືແຈ້ງການຂອງການອະນຸມັດຫລືການປະຕິເສດຂອງພະແນກDDDພ້ອມທັງສິດທິຂອງການຟັງເຣື່ອງຈາກອຳນາດການປົກຄອງຂອງທ່ານ.

## ລາຍຊື່ຄຳຮ້ອງຂໍເອົາີຟສ

ລາຍຊື່ຄຳຮ້ອງຂໍເອົາີຟສຈະລວມເອົາບຸກຄົນຜູ້ທີ່ອາສັຍຢູ່ນຳຄອບຄົວຂອງເຂົາເຈົ້າແລະຜູ້ທີ່ໄດ້ຮ້ອງຂໍເອົາການບໍຣິການຂອງໂຄງການIFS.ຖ້າເງິນທຶນບໍ່ມີໄວ້ໃຫ້ໃນເວລາຂອງການຮ້ອງຂໍ,ບຸກຄົນທີ່ມີເງື່ອນໄຂໄດ້ຖືກວາງໃສ່ລາຍຊື່ເລີ້ມຕົ້ນແຕ່ວັນທີຂອງຄຳຮ້ອງຂໍຂອງເຂົາເຈົ້າ.

## ການແບ່ງແຍກໃຫ້ປະຈຳປີຂອງີຟສ

ການຕີຣາຄາປະເມີນຜົນຂອງພະແນກDDDໄດ້ຖືກອອກແບບມາເພື່ອຈະວັດແທກຄວາມຕ້ອງການອູ້ມຊູຂອງບຸກຄົນທີ່ມີຄວາມເສັຽອົງຄະດ້ານການຈະເຣີນເຕີບໂຕແລະໄດ້ຖືກໃຊ້ເພື່ອຈະພິຈາຣະນາເບິ່ງຣະດັບຂອງຄວາມຕ້ອງການຂອງທ່ານ.ການແບ່ງແຍກປະຈຳປີຂອງIFSແມ່ນ:

- *ຣະດັບ1ສູງເຖິງ$2,000*
- *ຣະດັບ2ສູງເຖິງ$3,000*
- *ຣະດັບ3ສູງເຖິງ$4,000*
- *ຣະດັບ4ສູງເຖິງ$6,000*

## ການບໍຣິການທີ່ມີໄວ້ໃຫ້

### *ການເບິ່ງແຍງດູແລຊົ່ວຄາວ*

ການຜ່ອນຄາຍຣະຍະສັ້ນສຳລັບສະມາຊິກຄອບຄົວຜູ້ທີ່ໃຫ້ການເບິ່ງແຍງດູແລສຳລັບບຸກຄົນຜູ້ທີ່ກຳລັງໄດ້ຮັບການບໍຣິການໂຄງການIFS.

### *ຄ່າພະຍາບານເກີນທີ່ບໍ່ຖືກຄຸ້ມກັນໂດຍການບໍຣິການຢ່າງອື່ນ*

ຣາຍຈ່າຍຄ່າພະຍາບານຊຶ່ງເກີດຂຶ້ນມາໂດຍທ່ານຫລັງຈາກເມດີເຄດຫລືປະກັນພັຍເອກຊົນໄດ້ຖືກເຂົ້າເຖິງແລ້ວ,ຫລືເມື່ອທ່ານບໍ່ມີປະກັນພັຍພະຍາບານ.

### *ການຮັກສາໂຣກ*

ການຮັກສາໂຣກທີ່ຖືກຄຸ້ມກັນໂດຍໂຄງການIFSແມ່ນ:

- *ການຝຶກຫັດຮ່າງກາຍ*
- *ການຝຶກຫັດວຽກງານ*
- *ການຝຶກຫັດການປາກເວົ້າ,ການຟັງສຽງແລະພາສາ*

### *ການດັດແປງໃຫ້ໃຊ້ການໄດ້ໃນເຮືອນແລະຍານຍົນ*

ການເຮັດໃຫ້ເຫມາະສົມໃສ່ເຮືອນແລະຣົດຂອງບຸກຄົນເພື່ອຈະຮັບປະກັນສຸຂະພາບ,ຄວາມຢູ່ດີມີແຮງແລະຄວາມປອດພັຍຂອງລູກຄ້າແລະຜູ້ເບິ່ງແຍງດູແລ;ຫລືເພື່ອຈະເຮັດໃຫ້ລູກຄ້າ,ຜູ້ທີ່ຕ້ອງການສະພາບແວດລ້ອມທີ່ຈຳກັດຫລາຍກ່ວາ,ເພື່ອຈະທຳງານໄດ້ດ້ວຍອິສຣະພາບຫລາຍກວ່າຢູ່ໃນເຮືອນຫລືຊຸມນຸມຊົນຂອງເຂົາເຈົ້າ.

### *ເຄື່ອງຈັກເຄື່ອງມືແລະອຸປກອນໃຊ້ສອຍ*

ເຄື່ອງຈັກເຄື່ອງມືແລະອຸປກອນໃຊ້ສອຍຈຳເປັນດ້ານການພະຍາບານໄດ້ຖືກແຕ່ງຕັ້ງຂຶ້ນມາເພື່ອຈະຊ່ວຍບຸກຄົນໃຫ້ເພີ້ມເຕີມຂຶ້ນຫລືຮັກສາຄວາມສາມາດຂອງເຂົາເຈົ້າແລະເພື່ອຈະປະຕິບັດກິຈກັມການດຳຣົງຊີວິດປະຈຳວັນຂອງເຂົາເຈົ້າ.

### *ເຄື່ອງອຸປໂພກບໍຣິໂພກແລະເຄື່ອງນຸ່ງພິເສດ*

ນ້ຳນົມເດັກຫລືອາຫານທີ່ຖືກຈັດແຈງພິເສດຊຶ່ງໃບຫນັງສືແນະນຳໄດ້ຖືກເຮັດອອກມາໂດຍນັກວິຊາການທີ່ມີຄຸນນະວຸດທິແລະເຫມາະສົມແລະເມື່ອມັນເປັນສ່ວນນຶ່ງເຖິງ50 ເປີເຊັນຫລືຫລາຍກວ່າຂອງຈຳນວນຄາລໍຣີກິນເຂົ້າໄປຂອງບຸກຄົນ.
ເຄື່ອງນຸ່ງບໍ່ຄັບບໍ່ຈຳກັດທີ່ຖືກໃຊ້ການໄດ້ສຳລັບຄວາມເສັຽອົງຄະທາງຮ່າງກາຍ,ເຄື່ອງນຸ່ງໃຫຍ່ໆຫລົມໆຫລືເກີບພິເສດຊຶ່ງໃບຫນັງສືແນະນຳໄດ້ຖືກເຮັດອອກມາໂດຍນັກວິຊາການທີ່ມີຄຸນນະວຸດທິ.

### *ເງິນຈ່າຍຮ່ວມສຳລັບການບໍຣິການພະຍາບານແລະການຮັກສາໂຣກ*

ຄ່າທຳນຽມຕາຍໂຕຊຶ່ງຜູ້ຈອງໂຄງການພະຍາບານຕ້ອງໄດ້ຈ່າຍເພື່ອຈະໃຊ້ການບໍຣິການພະຍາບານຫລືການຮັກສາໂຣກອັນເຈາະຈົງທີ່ຖືກຄຸ້ມກັນໂດຍໂຄງການ.ການບໍຣິການເຫລົ່ານີ້ຕ້ອງໄດ້ຖືກຖືວ່າຈຳເປັນທາງດ້ານພະຍາບານໂດຍນັກວິຊາການທີ່ມີຄຸນນະວຸດທິ.

### *ການຂົນສົ່ງໄປມາ*

ການໃຊ້ເງິນແທນຄືນໃຫ້ຜູ້ໃຫ້ການຊ່ວຍເຫລືອເມື່ອການຂົນສົ່ງໄປມາຕ້ອງມີເພື່ອຈະເຂົ້າເຖິງການບໍຣິການຂອງIFS.

### *ການຝຶກຝົນແລະການປຶກສາ*

ການຊ່ວຍເຫລືອດ້ານວິຊາການທີ່ຖືກເອົາໃຫ້ແກ່ຄອບຄົວເພື່ອຈະຕອບສະນອງຄວາມຕ້ອງການອັນເຈາະຈົງສະເພາະຂອງບຸກຄົນໃຫ້ດີກວ່າເກົ່າ.

### *ການກຳກັບຄວບຄຸມນຳການປະພຶດ*

ການອອກແບບແຜນແລະການວາງໃຊ້ຂອງໂຄງການຊຶ່ງຈະໃຊ້ຫລັກວິຊາການປະພຶດທີ່ໃຊ້ໄດ້ດີເພື່ອຈະອູ້ມຊູບຸກຄົນທີ່ມີການປະພຶດທີ່ຕ້ອງດັດແປງ.

### *ການສຶກສາສຳລັບພໍ່ແມ່/ອ້າຍນ້ອງຄີງ*

ການຝຶກຝົນຢູ່ຫ້ອງຮຽນກ່ຽວຫົວຂໍ້ທີ່ກ່ຽວຂ້ອງນຳພໍ່ແມ່ແລະອ້າຍນ້ອງຄີງໆຜູ້ທີ່ມີສະມາຊິກຄອບຄົວທີ່ມີຄວາມເສັຽອົງຄະດ້ານການຈະເຣີນເຕີບໂຕ.

### *ໂອກາດການພັກຜ່ອນ*

ກິຈກັມພັກຜ່ອນຢ່ອນອາຣົມຊຶ່ງອາດຈະມີໄວ້ໃຫ້ແກ່ລູກຄ້າຜູ້ທີ່ມີເງື່ອນໄຂໄດ້ຮັບເຊັ່ນວ່າການອອກນອນປ່າຍາມພັກຮ້ອນ,ກິຈກັມYMCA,ການທ່ຽວທັສນະກາງເວັນ,ການເປັນສະມາຊິກໃນກຸ່ມຊຸມຊົນ,ສະໂມສອນ,ຫ້ອງຮຽນການຊ່າງ,ກິຈກັມການກິລາຫລກິຈກັມການພັກຜ່ອນທັມມະດາທີ່ມີຢູ່ໃນຊຸມຊົນຂອງທ່ານ.